ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ສຳນັກງານ ຄຄຊ
ເລກທີ 1140
ວັນທີ 13 OCT 2017
ໂທລະສັບ 021 217770

ເລກທີ: 46 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 11 ຕຸລາ 2017

ລາຍງານການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ
ປະຈຳອາທິດທີ 25-29/09/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

## I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ. ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 1,61% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງສະຫະລັດອາເມລິກາ ອອກມາດີ ເປັນຕົ້ນແມ່ນຕົວເລກຍອດສັ່ງຊື້ສິນຄ້າຄົງທົນ ເພີ່ມຂຶ້ນ 1,70% ຂອງເດືອນ 08/2017 ຈາກຫຼຸດລົງ 6,80% ໃນເດືອນຜ່ານມາ; ພ້ອມກັນນັ້ນ, ຈຳນວນປະຊາກອນທີ່ຂໍສະຫວັດດີການຕໍ່ເນື່ອງ ຫຼຸດລົງຈາກ 1,98 ລ້ານຄົນ ໃນອາທິດຜ່ານມາ ມາເປັນ 1,93 ລ້ານຄົນໃນອາທິດທີ 16/09/2017.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ<br>18-22/09/2017 | ອາທິດນີ້<br>25-29/09/2017 | ເປີເຊັນ ແຂງຄ່າ(+) /<br>ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1989 | 1,1799 | 1,61% |
| ເຢນ/ໂດລາ | 112,03 | 112,49 | -0,41% |
| ບາດ/ໂດລາ | 33,09 | 33,32 | -0,69% |
| ເປໂຊ/ໂດລາ | 50,66 | 50,80 | -0,28% |
| ຣູເປັຍ/ໂດລາ | 13.310 | 13.470 | -1,19% |
| ໂດລາສິງກະໂປ/ໂດລາ | 1,3479 | 1,3579 | -0,74% |
| ຢວນ/ໂດລາ | 6,5905 | 6,6510 | -0,91% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ເພີ່ມຂຶ້ນ 3,46% ຈາກ 50,54 ໂດລາ/ບາເຣວ ມາເປັນ 52,29 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນແອັດຊັງຂອງສະຫະລັດອາເມລິກາໃນອາທິດນີ້ຫຼຸດລົງຄື: 1,85 ລ້ານບາເຣວ;
- ສຳລັບລາຄາຄຳ ຫຼຸດລົງ 0,59% ຈາກ 1.295,61 ໂດລາ/ອອນ ມາເປັນ 1.288,00 ໂດລາ/ອອນ ເນື່ອງຈາກນັກລົງທຶນເທຂາຍຄຳ ແລະ ສັນຍາຊື້ຂາຍຄຳ ເພື່ອເກັງກຳໄລ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາ ອ່ອນຄ່າລົງ 0.37% ແຕ່ ແຂງຄ່າຂຶ້ນ 0.39% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 0.50% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 6.93% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 18-22/09/2017 | | | ອາທິດນີ້ 25-29/09/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8 336.03 | 8 354.45 | 8 346.58 | 8 360.66 | 8 390.21 | 8 377.22 | -0.29% | -0.43% | -0.37% | -0.53% | -0.43% | -0.50% |
| ບາດ | 252.23 | 253.42 | 253.02 | 251.37 | 252.78 | 252.04 | 0.34% | 0.25% | 0.39% | -7.07% | -6.99% | -6.93% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 0.78% ເມື່ອທຽບໃສ່ອາທິດຜ່ານມາ. ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 22.16%:
- ປະລິມານເງິນ M2 ຫຼຸດລົງ 0.05% ເມື່ອທຽບໃສ່ອາທິດຜ່ານມາ. ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 12.78%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (22-28/09/2017) ເຫັນວ່າ ທທກ ຂາຍໂດລາສຸດທິ 5.38 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 27.14 ລ້ານໂດລາ ແລະ ຂາຍໂດລາໄດ້ 32.52 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 156.55 ລ້ານບາດ (ໃນນີ້ ຊື້ບາດໄດ້ 330.01 ລ້ານບາດ ແລະ ຂາຍບາດໄດ້ 486.56 ລ້ານບາດ): ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ ເງິນໂດລາຫຼຸດລົງ 6.03% ແລະ ເງິນບາດເພີ່ມຂຶ້ນ 28.06%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈຳນວນ 11.45 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 110.00 ລ້ານບາດ:
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 4.20 ລ້ານໂດລາສະຫະລັດ ແລະ ເງິນບາດ ຈຳນວນ 122.46 ລ້ານບາດ:
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ເງິນໂດລາ ຈຳນວນ 0.01 ລ້ານໂດລາສະຫະລັດ ແລະ ເງິນບາດສຸດທິ ຈຳນວນ 0.05 ລ້ານບາດ.

---

1 % ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 15-21/08/2017 | | ອາທິດນີ້ 22-28/09/2017 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **27,62** | **211,12** | **27,14** | **330,01** | **-1,74%** | **56,31%** |
| - ທ/ຄທຸລະກິດລັດ | 8.25 | 38.03 | 10.15 | 45.31 | 23.03% | 19.14% |
| - ທ/ຄທຸລະກິດອື່ນໆ | 19.37 | 173.09 | 16.99 | 284.70 | -12.29% | 64.48% |
| 2. ການຂາຍເງິນຕາຕ່າງປະເທດ | **35,87** | **426,52** | **32,52** | **486,56** | **-9,34%** | **14,08%** |
| - ທ/ຄທຸລະກິດລັດ | 16.79 | 177.12 | 12.35 | 102.54 | -26.44% | -42.11% |
| - ທ/ຄທຸລະກິດອື່ນໆ | 19.08 | 249.40 | 20.17 | 384.02 | 5.71% | 53.98% |
| ຊື້-ຂາຍສຸດທິ ທທກ | **-8,25** | **-215,40** | **-5,38** | **-156,55** | **-34,79%** | **-27,32%** |
| - ຜິດດ່ຽງ ຊື້-ຂາຍ | -29.87% | -102.03% | -19.82% | -47.44% | -33.65% | -53.50% |
| - ມູນຄ່າການຊື້-ຂາຍ | **63,49** | **637,64** | **59,66** | **816,57** | **-6,03%** | **28,06%** |
| 3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ | **-16,76** | **-110,50** | **-11,45** | **-110,00** | | |
| - ທຫລ ຊື້ຈາກ ທທກ | 0.00 | 0.00 | 0.00 | 0.00 | | |
| - ທຫລ ຂາຍໃຫ້ ທທກ | 16.76 | 110.50 | 11.45 | 110.00 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **2,55** | **20,00** | **4,20** | **122,46** | | |
| 5. ທຫລ ກັບ ພາກສ່ວນ ອື່ນໆ | **0,00** | **-40,00** | **0,01** | **0,05** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0.02 | 0.00 | 0.14 | 0.05 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0.02 | 40.00 | 0.13 | 0.00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 09/2017 ຄາດວ່າຈະຢູ່ໃນລະດັບ 0.32% ເພີ່ມຂຶ້ນຈາກ 0.16% ໃນເດືອນ 08/2017.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດ ໃນອາທິດນີ້ ເພີ່ມຂຶ້ນ 480% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 68.04 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ເພີ່ມຂຶ້ນ 10.1% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 37.82 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 738 ສະບັບ ທຽບໃສ່ອາທິດຜ່ານມາຫຼຸດລົງ 120 ສະບັບ ເທົ່າກັບ 13,98% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 280,95 ຕື້ກີບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 191,36 ຕື້ກີບ ເທົ່າກັບ 40,51% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (22-28/09/2017) ມີທັງໝົດ 3.740 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 3.633 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ 653.94 ຕື້ກີບ ຈາກ 1.273.65 ຕື້ກີບ ມາເປັນ 619.74 ຕື້ກີບ ເທົ່າກັບ 51.34%;

- ກະຊວງການເງິນ: ມີການເຄື່ອນໄຫວຈຳນວນ 107 ຄັ້ງ, ມູນຄ່າການໂອນໃນອາທິດຜ່ານມາ ເຫັນວ່າ ຫຼຸດລົງ 241,15 ຕື້ກີບ ຈາກ 259,69 ຕື້ກີບ ມາເປັນ 18,54 ຕື້ກີບ ເທົ່າກັບ 92,86%.

## 4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.028.84 ຈຸດ ເພີ່ມຂຶ້ນ 0,02% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 208.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,11 ຕື້ກີບ ຫຼຸດລົງ 82,87% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 48.69% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 18-22/09/2017 | ດັດຊະນີອາທິດທີ 25-29/09/2017 | %(ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.028.64 | 1.028.84 | 0,02 | |

ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX) (ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 18.300 | 97.340.000 | 5.319 | 125.900 | 672.350.000 | 5.340 | 587,98 | 590,72 | 21 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 86.000 | 439.495.000 | 5.110 | 78.600 | 413.870.000 | 5.266 | -8,60 | -5,83 | 155 |
| ບໍລິສັດລາວເວີນ ມະຫາຊົນ | 803.500 | 5.943.500.000 | 7.397 | 3.300 | 24.420.000 | 7.400 | -99,59 | -99,59 | 3 |
| ບໍລິສັດປີໂຕລ້ຽມເທຣດ ດິ້ງລາວ ມະຫາຊົນ | 3.600 | 6.900.000 | 1.917 | - | - | 1.950 | -100,00 | -100,00 | 33 |
| ບໍລິສັດສຸວັນນີໂຮມເຊັນເຕີ ມະຫາຊົນ | - | - | 3.000 | 300 | 885.000 | 3.000 | - | - | - |
| ທັງໝົດ | 911.400 | 6.487.235.000 | 7.118 | 208.100 | 1.111.525.000 | 5.341 | -77,17 | -82,87 | |

## 3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສຳເລັດການເຂົ້າຮ່ວມກອງປະຊຸມ , ຈັດກອງປະຊຸມ ແລະ ສຳມະນາຕ່າງໆ: ❶ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ສະໄໝສາມັນ ເພື່ອລາຍງານການຈັດຕັ້ງປະຕິບັດແຜນເງິນຕາປີ 2017 ແລະ ແຜນການປີ 2018 ທີ່ (ສະພາແຫ່ງຊາດ); ❷ ກອງປະຊຸມວຽກງານການປະເມີນຄວາມສ່ຽງລະດັບຊາດກ່ຽວກັບວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ (ທຫລ); ❸ ກອງປະຊຸມສົ່ງເສີມການຮ່ວມມືລະຫວ່າງທະນາຄານທຸລະກິດລາວ ແລະ ທະນາຄານທຸລະກິດຂອງໄທ ໃນລະຫວ່າງວັນທີ 24-26 ກັນຍາ 2017 ທີ່ (ທຫລ); ❹ ກອງປະຊຸມສຳມະ

ມາໃນຫົວຂໍ້ "ການໃຫ້ສິນເຊື່ອແກ່ຜູ້ປະກອບການຄັງສິນຄ້າ ແລະ ການຄຸ້ມຄອງຫຼັກຊັບຄ້ຳປະກັນຄັ້ງທີ 05" ໃນລະຫວ່າງວັນທີ 25-27 ກັນຍາ 2017 ທີ່ (ປະເທດຈີນ) ແລະ ❺ ກອງປະຊຸມປະກອບຄຳເຫັນໃສ່ແຜນສ້າງຄວາມເຂັ້ມແຂງວຽກງານປະຊາສຶກສາທາງດ້ານການເງິນແຫ່ງຊາດ (ແຕ່ປີ 2018-2025) ໃນວັນທີ 25 ກັນຍາ 2017 ທີ່ (ຕະຫຼາດຫຼັກຊັບລາວ ຊັ້ນ 07);

- ສຳເລັດການເດີນທາງໄປຕິດຕາມທ່ານນາຍົກລັດຖະມົນຕີ ໄປຢ້ຽມຢາມ ສະຫະພັນລັດເຊຍ ຂອງທ່ານ ຮອງຜູ້ວ່າການ ທຫລ ໃນລະຫວ່າງ ວັນທີ 25-28 ກັນຍາ 2017.

## III. ແຜນວຽກຈຸດສຸມອາທິດຕໍ່ໄປ:

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;

- **ກະກຽມຈັດກອງປະຊຸມ ແລະ ເຂົ້າຮ່ວມກອງປະຊຸມຕ່າງໆ:** ❶ ກອງປະຊຸມຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍສະໄໝສາມັນ ຄັ້ງທີ III ປະຈຳປີ 2017 ທີ່ (ທຫລ); ❷ ກອງປະຊຸມຮ່ວມກັນລະຫວ່າງ ທຫລ ແລະ ທະນາຄານທອງຄຳຕື່ມ ທີ່ (ທຫລ); ❸ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ເພື່ອຜ່ານຮ່າງກົດໝາຍວ່າດ້ວຍລະບົບການຊຳລະ ທີ່ (ທຫລ); ❹ ກອງປະຊຸມກ່ຽວກັບການປະຕິບັດໂຄງການສົ່ງເສີມການຜະລິດເປັນສິນຄ້າ ແລະ ຄ້ຳປະກັນສະບຽງອາຫານ ທີ່ (ກະຊວງກະສິກຳ ແລະ ປ່າໄມ້); ❺ ກອງປະຊຸມຄະນະຄົ້ນຄວ້າກຳນົດອັດຕາແລກປ່ຽນ ແລະ ຄຸ້ມຄອງເງິນຕາຕ່າງປະເທດ ທີ່ (ທຫລ); ❻ ກອງປະຊຸມຄະນະກຳມະການລະດັບສູງວຽກງານການເຊື່ອມໂຍງຂະແໜງການເງິນອາຊຽນ ຄັ້ງທີ 14 ທີ່ (ແຂວງ ຫຼວງພະບາງ) ແລະ ❼ ກອງປະຊຸມປຶກສາຫາລືກ່ຽວກັບການຊຸກຍູ້ສົ່ງເສີມການຜະລິດກາເຟເປັນສິນຄ້າ ທີ່ (ທຫລ);

- ຕ້ອນຮັບການເຂົ້າຂໍ່ານັບຄະນະຜູ້ວ່າການ ຂອງ ທ່ານ Rufus Pinto ຜູ້ອຳນວຍການໃຫຍ່ຄົນໃໝ່ ແລະ ທ່ານ ນ. Anna Gree ຜູ້ອຳນວຍການໃຫຍ່ຄົນເກົ່າ ຈາກທະນາຄານເອເຊັນແຊັດ ທີ່ (ທຫລ).

ຫົວໜ້າຫ້ອງການ

ໜີດສະຖາພອນ ແກ້ວວົງວິຈິດ